Washington State Department of Social & Health Services — Transforming lives

# ການສະລະສິດໃນການຟັງເຣື່ອງການຫມົດສິດຈາກອຳນາດການປົກຄອງ
# Waiver of Administrative Disqualification Hearing

ສຳລັບໂຄງການຊ່ວຍເຫລືອອາຫານຂອງຣັດວໍຊິງຕັນ

| ວັນທີ | ຊື່ຂອງລູກຄ້າ | SSN ຂອງລູກຄ້າ | ວັນເກີດຂອງລູກຄ້າ | ເລກ ID ຂອງລູກຄ້າ |
|---|---|---|---|---|
| | | | | |

ທ່ານກຳລັງຖືກສົ່ງຕໍ່ໄປເອົາການຟັງເຣື່ອງຈາກອຳນາດການປົກຄອງໂດຍອີງຕາມຄວາມເຊື່ອຖືຂອງພວກເຮົາວ່າທ່ານໄດ້ເຮັດຜິດໃນການລ່ວງລະເມີດໂຄງການໂດຍເຈດຕະນາ (Intentional Program Violation) (IPV). ທ່ານມີສິດທີ່ຈະມາປາກົດຕົວໃນເວລາຟັງເຣື່ອງ ແລະ ຄັດຄ້ານຂໍ ກ່າວຫາໃສ່ທ່ານທ່ານຍັງມີສິດອີກຄືກັນທີ່ຈະສະລະສິດ (ຍົກເລີກ) ສິດທິຂອງທ່ານຕໍ່ການຟັງເຣື່ອງ. **<u>ຖ້າຫາກວ່າທ່ານຕັດສິນໃຈທີ່ຈະສະລະສິດການຟັງເຣື່ອງຂອງທ່ານ, ທ່ານຕ້ອງໄດ້ຮູ້ຈັກສິ່ງຕໍ່ລົງໄປນີ້:</u>**

1. ຖ້າຫາກວ່າທ່ານເຊັນຊື່ໃສ່ໃບຕົກລົງສັນຍາໃບນີ້,ທ່ານຈະຖືກຫມົດສິດທີ່ຈະໄດ້ຮັບການຊ່ວຍເຫລືອ ແລະ ມັນຈະຈະມີການລຸດລົງໃນການຊ່ວຍເຫລືອສຳລັບຣະຍະເວລາຂອງການຫມົດສິດທັງຫມົດເຖິງແມ່ນວ່າທ່ານຈະບໍ່ຍອມຮັບຄວາມຈິງຕາມທີ່ຖືກກ່າວຫາໂດຍຫ້ອງການຂອງຣັດກໍຕາມ.
2. ທ່ານບໍ່ຕ້ອງໄດ້ຍອມຮັບຕໍ່ຂໍ ກ່າວຫາແນວໃດແນວນຶ່ງຈັກຢ່າງ. ທ່ານມີສິດທີ່ຈະຍັງມິດຢູ່ຄືເກົ່າກ່ຽວກັບຂໍ ກ່າວຫາ, ຍ້ອນວ່າທຸກໆຢ່າງທີ່ທ່ານເວົ້າ ຫລື ເຊັນຊື່ສາມາດຖືກໃຊ້ໃນສານແຫ່ງກົດຫມາຍ.
3. ຖ້າຫາກວ່າທ່ານເຊັນຊື່ໃສ່ໃບສະລະສິດໃບນີ້,ທ່ານຍັງຈະຕ້ອງໄດ້ເລືອກເອົານຶ່ງໃນຄຳແຈ້ງການຕໍ່ລົງໄປນີ້ເພື່ອຈະຊີ້ບອກວ່າທ່ານຍອມຮັບຄວາມຈິງ ຫລື ບໍ່ຕໍ່ຄວາມຈິງທີ່ຖືກກ່າວຫາ:

   ☐ ຂ້າພະເຈົ້າຍອມຮັບຄວາມຈິງຕາມທີ່ຖືກສະເນີມາ ແລະ ເຂົ້າໃຈວ່າການປັບໄຫມລົງໂທດການສະລະສິດຈະຖືກວາງໃສ່ຖ້າຫາກວ່າຂ້າພະເຈົ້າເຊັນຊື່ໃສ່ໃບສະລະສິດໃບນີ້.

   ☐ ຂ້າພະເຈົ້າບໍ່ຍອມຮັບຄວາມຈິງຕາມທີ່ຖືກສະເນີມາວ່າຖືກຕ້ອງ. ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າໄດ້ເລືອກເອົາທີ່ຈະເຊັນຊື່ໃສ່ໃບສະລະສິດໃບນີ້ ແລະ ເຂົ້າໃຈວ່າການປັບໄຫມລົງໂທດການສະລະສິດຈະເປັນຜົນອອກມາ.
4. ສະມາຊິກຄອບຄົວຜູ້ໃຫຍ່ທີ່ຍັງເຫລືອຢູ່, ຖ້າມີຢູ່, ຈະຖືກຖືວ່າຮັບຜິດຊອບສຳລັບຈ່າຍເງິນຂອງການທວງທີ່ເປັນຜົນອອກມາ.
5. ການປັບໄຫມລົງໂທດຍັງຈະຢູ່ຄືເກົ່າບໍ່ກ່ຽວວ່າທ່ານຈະເລືອກເອົາການຟັງເຣື່ອງ ຫລື ບໍ່ ແລະ ຖືກພົບວ່າຜິດ ຫລື ບໍ່, ຫລື ບໍ່ກ່ຽວວ່າທ່ານສະລະສິດການຟັງເຣື່ອງ ຫລື ບໍ່.

**ການສະລະສິດອັນນີ້ຕ້ອງຖືກສົ່ງກັບຄືນມາພາຍໃນ       ວັນຂອງວັນທີຂ້າງເທິງນີ້.ຖ້າຫາກວ່າບໍ່ມີໃບສະລະສິດຖືກສົ່ງກັບຄືນມາ, ການຟັງເຣື່ອງຈາກອຳນາດການປົກຄອງຈະຖືກເຮັດນັດໃຫ້.**

**ຖ້າຫາກວ່າຜູ້ທີ່ຖືກກ່າວຫາບໍ່ແມ່ນຫົວຫນ້າຂອງຄອບຄົວ, ຫົວຫນ້າຂອງຄອບຄົວຕ້ອງເຊັນຊື່ໃສ່ໃບສະລະສິດໃບນີ້ອີກຄືກັນຕາມທີ່ຖືກກ່າວຢູ່ໃນກົດຫມາຍ 7 CFR 273.16(3).**

**ເພື່ອຣາຍຣະອຽດເພີ້ມເຕີມ, ທ່ານຈະຕິດຕໍ່ຫາ            ໄດ້ທີ່ເລກ          .**

## ການອະທິບາຍຂອງສິດທິຂອງການຟັງເຣື່ອງຂອງທ່ານ

ຖ້າຫາກວ່າທ່ານບໍ່ຍອມຮັບຄວາມຈິງຕາມທີ່ຖືກສະເນີມາວ່າຖືກຕ້ອງ ແລະ ຢາກຈະທົດລອງສິດທິຂອງທ່ານໃນການຟັງເຣື່ອງຈາກອຳນາດການປົກຄອງ, ທ່ານບໍ່ຕ້ອງໄດ້ເຮັດແນວໃດຕໍ່ໄປອີກ.

ທ່ານຈະຖືກແຈ້ງບອກກ່ຽວກັບວັນ ແລະ ເວລາ ຂອງການຟັງເຣື່ອງໂດຍຫ້ອງການການຟັງເຣື່ອງຈາກອຳນາດການປົກຄອງ. ໃບແຈ້ງການຈະລວມເອົາສິດທິຂອງການຟັງເຣື່ອງເຫລົ່ານີ້ຕາມທີ່ຖືກບົ່ງຢູ່ໃນກົດຫມາຍ 7 CFR 273.16(e)(3).

## ຄຳເຕືອນເຣື່ອງການປັບໄຫມລົງໂທດຂອງໂຄງການຊ່ວຍເຫລືອອາຫານ

**ພາຍໃຕ້ກົດຫມາຍ WAC 388-446-0020, ບຸກຄົນຈະບໍ່ໄດ້ຮັບການຊ່ວຍເຫລືອອາຫານເປັນເວລາ:**

**<u>ນຶ່ງປີ</u>** ສຳລັບການລ່ວງລະເມີດໂດຍຮູ້ຈັກດີໃນກົດຣະບຽບຂອງການຊ່ວຍເຫລືອອາຫານ ຫລື ໂຄງການຊ່ວຍເຫລືອອາຫານການກິນເພີ້ມເຕີມ (SNAP);

**<u>ສອງປີ</u>** ສຳລັບການລ່ວງລະເມີດເທື່ອທີສອງ; ຫລື ການຕັດສິນລົງໂທດເທື່ອທຳອິດສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານ ຫລື ການຊ່ວຍເຫລືອ SNAP ສຳລັບຫາດຢາເສພຕິດ;

**<u>ສິບປີ</u>** ສຳລັບການເອົາຣາຍຣະອຽດໃຫ້ໂດຍຮູ້ຈັກດີກ່ຽວກັບບັດປະຈຳຕົວ ຫລື ບ່ອນຢູ່ທີ່ບໍ່ຖືກຕ້ອງ ເພື່ອຈະໄດ້ຮັບການຊ່ວຍເຫລືອອາຫານຊ້ຳກັນ;

**<u>ຕະລອດຊີວິດ</u>** ສຳລັບ:

ການລ່ວງລະເມີດຮູ້ຈັກດີໃນກົດຣະບຽບຂອງການຊ່ວຍເຫລືອອາຫານ ຫລື ການຊ່ວຍເຫລືອ SNAP ເທື່ອທີສາມ;
ການຕັດສິນລົງໂທດເທື່ອທີສອງສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານສຳລັບຫາດຢາເສພຕິດ;
ການຕັດສິນລົງໂທດສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານສຳລັບປືນ, ກະສຸນ, ຫລື ຣະເບີດ; ຫລື
ການຕັດສິນລົງໂທດສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານທີ່ມີມູນຄ່າ $500 ຫລື ຫລາຍກວ່າ.

**ບຸກຄົນຜູ້ທີ່ລ່ວງລະເມີດໂດຍຮູ້ຈັກດີ ແລະ ໂດຍເຈຕນາໃນກົດຣະບຽບຂອງການຊ່ວຍເຫລືອອາຫານສາມາດຖືກຕັດສິນລົງໂທດ ແລະ ຖືກປັບໄຫມຮອດ $250,000 ຫລື ຂັງຄຸກຮອດຊາວປີ ຫລື ທັງສອງຢ່າງ. ເຂົາເຈົ້າຍັງຈະຖືກຕັດສິນລົງໂທດອີກຄືກັນພາຍໃຕ້ກົດຫມາຍຂອງຣັດຖະບານກາງອື່ນໆທີ່ກ່ຽວຂ້ອງນຳ.**

| ລາຍເຊັນຂອງບຸກຄົນຜູ້ທີ່ຫມົດສິດ | ວັນທີ | ລາຍເຊັນຂອງຫົວຫນ້າຄອບຄົວ (HH)<br>(ຖ້າຫາກວ່າຜູ້ທີ່ຖືກກ່າວຫາບໍ່ແມ່ນຫົວຫນ້າຄອບຄົວ) | ວັນທີ |
|---|---|---|---|
| | | | |